






ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ

ກົມອາຊີວະສຶກສາ

## ບົດສະຫລຸບສັງລວມຜົນກອງປະຊຸມ ຜູ້ບໍລິຫານອາຊີວະສຶກສາ ທົ່ວປະເທດຄັ້ງທີ XII
## ວັນທີ 18-20 ພຶດສະພາ 2011, ທີ່ ວິທະຍາໄລ ເຕັກນິກ ປາກປ່າສັກ, ນະຄອນຫລວງວຽງຈັນ

ກອງປະຊຸມຜູ້ບໍລິຫານອາຊີວະສຶກສາ ຄັ້ງທີ XII ໄດ້ດຳເນີນແຕ່ວັນທີ 18-20 ພຶດສະພາ 2011 ທີ່ວິທະຍາໄລ ເຕັກນິກ ປາກປ່າສັກ, ນະຄອນຫລວງວຽງຈັນ, ພາຍໃຕ້ການເປັນປະທານຂອງທ່ານ ຮສ. ດຣ ກອງສີ ແສງມະນີ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະ ມີທ່ານຫົວໜ້າຫ້ອງການ ກະຊວງສຶກສາທິການ, ທ່ານຫົວໜ້າ ກົມຈັດຕັ້ງ-ພະນັກງານ ກະຊວງສຶກສາທິການ, ທ່ານຮອງຫົວໜ້າກົມ, ຫົວໜ້າ ພະແນກ, ຮອງພະແນກ ຂອງກະຊວງ ສຶກສາທິການ, ຕາງໜ້າກະຊວງແຮງງານ-ສະຫວັດດີການສັງຄົມ, ຕາງໜ້າຄະນະ ກຳມະການວັດທະນາທຳ-ສັງຄົມ ສະພາ ແຫ່ງຊາດ, ຫົວໜ້າຂະແໜງອາຊີວະສຶກສາ ພະແນກສຶກສາທິການ ແຂວງ ແລະ ນະຄອນຫລວງ, ຜູ້ອຳນວຍການ, ຮອງຜູ້ອຳນວຍການສູນ, ວິທະຍາໄລອາຊີວະສຶກສາ ພາກລັດ-ເອກະຊົນ, ຕາງໜ້າກຸ່ມອາຊີບ ແລະ ຕາງໜ້າອົງການ ຈັດຕັ້ງ ສາກົນ ເຂົ້າຮ່ວມ ທັງໝົດ 85 ທ່ານ, ຍິງ 8 ທ່ານ.

ກອງປະຊຸມໄດ້ຄົ້ນຄວ້າບົດສະຫຼຸບການປະຕິບັດແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສົກຮຽນ 2010-2011 ແລະ ໄດ້ຕົກລົງບັນຫາສຳຄັນ ຂອງແຜນພັດທະນາອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສຳລັບສົກຮຽນ 2011-12 ພາຍໃຕ້ບັນຍາກາດສ້າງສັນ, ເປັນເອກະພາບສູງ ແລະ ໄດ້ສິ້ນສຸດລົງດ້ວຍຜົນສຳເລັດ ອັນຈົບງາມ.

I. ເອກະສານທີ່ນຳມາສະເໜີ ແລະ ຄົ້ນຄ້ວາ ຕໍ່ກອງປະຊຸມມີ:

1. ຮ່າງ ບົດສະຫຼຸບການພັດທະນາວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ສົກຮຽນ 2010-2011.
2. ຮ່າງແຜນການພັດທະນາວຽກງານອາຊີວະສຶກສາ ສຳລັບ ສົກຮຽນ 2011-2012
3. ເອກະສານບົດລາຍງານກ່ຽວກັບ ການຖອດຖອນບົດຮຽນ ດ້ານດີ, ດ້ານອ່ອນ ແລະ ຂໍ້ຫຍຸ້ງຍາກ ພາຍຫລັງ ຍົກລະດັບ ຂຶ້ນເປັນ ວິທະຍາໄລ(ວິທະຍາໄລເຕັກນິກ ສັບພະວິຊາ, ວິທະຍາໄລເຕັກນິກ ປາກປ່າສັກ, ວິທະຍາໄລເຕັກນິກ ແຂວງ ວຽງຈັນ ແລະ ວິທະຍາໄລ ເຕັກນິກ-ວິຊາຊີບ ແຂວງ ຈຳປາສັກ)
4. ການຈັດຕັ້ງປະຕິບັດ ກິດຈະກຳໂຄງການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມ ວິຊາຊີບ (ໂຄງການ STVET) ແລະ ການສະໜອງທຶນການສຶກສາໃຫ້ແກ່ນັກຮຽນໃນໂຄງການ
5. ເອກະສານການພັດທະນາມາດຕະຖານ ແລະ ຫລັກສູດ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ
6. ເອກະສານຄູ່ມື ການປະກັນຄຸນນະພາບການສຶກສາ ສຳລັບສະຖານອາຊີວະສຶກສາ
7. ເອກະສານການຖອດຖອນບົດຮຽນ ກ່ຽວກັບການຝຶກອົບຮົມວິຊາຊີບ ແບບມີສ່ວນຮ່ວມ ແລະ ການຮ່ວມມື ພາກລັດ ແລະ ເອກະຊົນ
8. ເອກະສານ ບົດຮຽນການຈັດປະຕິບັດ ຮູບແບບການຝຶກອົບຮົມວິຊາຊີບ ແບບປະສົມ ຂອງໂຮງຮຽນເຕັກນິກ-ວິຊາຊີບ ແບບປະສົມ 6 ແຂວງ ພາກເໜືອ
9. ເອກະສານ ຮ່າງຄຳສັ່ງແນະນຳ ວ່າດ້ວຍການຈັດຕັ້ງສອບເສັງ ແລະ ສຳພາດ ຮັບນັກຮຽນເຂົ້າຮຽນໃນໂຮງຮຽນ ອາຊີວະສຶກສາ ສົກຮຽນ 2011-12

10. ວຽກງານຄຸ້ມຄອງ ແລະ ບໍລິຫານ ອາຊີວະສຶກສາ (ເຄື່ອງແບບ, ການມອບ-ຮັບໃບປະກາດ ແລະ ບັນຫາ ຕ່າງໆ ທີ່ພົວພັນ ກັບອາຊີວະສຶກສາ)

## II. ຜົນສຳເລັດ ແລະ ມະຕິກອງປະຊຸມ

1. ກອງປະຊຸມ ໄດ້ຄົ້ນຄວ້າຢ່າງເລິກເຊິ່ງ ຕໍ່ບົດສະຫຼຸບ ການພັດທະນາວຽກງານອາຊີວະສຶກສາ ແລະ ຝຶກອົບຮົມ ວິຊາຊີບ ສົກຮຽນ 2010-2011. ໃນນັ້ນ ກອງປະຊຸມໄດ້ເຫັນດີເປັນເອກະພາບ ແລະ ປັບປຸງບາງຈຸດ ຄື: ກວດກາຄືນດ້ານ ສະຖິຕິ ແລະ ຂໍ້ມູນ ໃນບົດສະຫລຸບ ທີ່ຍັງບໍ່ທັນຄົບຖ້ວນ
2. ກອງປະຊຸມໄດ້ເປັນເອກະພາບ ຮັບຮອງ ເອົາທິດທາງແຜນການພັດທະນາວຽກງານອາຊີວະສຶກສາ ສຳລັບ ສົກຮຽນ 2011-2012. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຄາດໝາຍ ສູ້ຊົນໃຫ້ເປັນຈິງ ກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ ມີການ ກຳນົດ ຕົວເລກ ຄາດໝາຍ ໃນການຈັດຕັ້ງປະຕິບັດ ໃຫ້ຈະແຈ້ງໃນແຕ່ລະດ້ານ.
3. ກອງປະຊຸມໄດ້ເປັນເອກະພາບຕໍ່ບົດສະເໜີ ກ່ຽວກັບການຈັດຕັ້ງປະຕິບັດ ການຮຽນ-ການສອນ ແລະ ການຖອດຖອນ ບົດຮຽນດ້ານດີ, ດ້ານອ່ອນ ແລະ ຂໍ້ຫຍຸ້ງຍາກ ພາຍຫລັງຍົກລະດັບ ຂຶ້ນເປັນວິທະຍາໄລ. ພ້ອມກັນນັ້ນ ກອງປະຊຸມ ເຫັນດີໃຫ້ ໂຮງຮຽນເຕັກນິກ-ວິຊາຊີບ ແຂວງຫລວງພະບາງ, ແຂວງຄຳມ່ວນ ແລະ ສະຫວັນນະເຂດ ກະກຽມ ຄວາມພ້ອມ ດ້ານຕ່າງໆ ເພື່ອຍົກຂຶ້ນເປັນວິທະຍາໄລເຕັກນິກ ໃນສົກ 2011-12
4. ກອງປະຊຸມໄດ້ຄົ້ນຄ້ວາ ເອກະສານ ກ່ຽວກັບການພັດທະນາ ມາດຕະຖານ ແລະ ຫລັກສູດ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ, ຜູ້ແທນກອງປະຊຸມ ເຫັນດີນຳສະເໜີຕໍ່ຂັ້ນເທິງ ເພື່ອຂໍອະນຸມັດ ໃຫ້ຜູ້ທີ່ຮຽນຈົບ ວິຊາຊີບ ລະດັບ 9+3 ໄດ້ຮັບປະກາສະນິຍະບັດວິຊາຊີບ ລະດັບຊັ້ນກາງ ແລະ ເຫັນດີພັດທະນາຫລັກສູດ ບາງສາຂາວິຊາ ຕາມ ຮູບແບບ ອີງໃສ່ຄວາມສາມາດ (CBT)
5. ກອງປະຊຸມເຫັນດີເຫັນພ້ອມ ນຳປຶ້ມຄູ່ມື ການປະກັນຄຸນນະພາບການສຶກສາ ສາຍອາຊີວະສຶກສາ ແລະ ພ້ອມກັນ ນຳເອົາໄປຈັດຕັ້ງປະຕິບັດ ເພື່ອກ້າວໄປສູ່ການປະກັນຄຸນນະພາບ ໃນອານະຄົດ
6. ກອງປະຊຸມໄດ້ຮັບຟັງລາຍງານ ຮູບແບບການຝຶກອົບຮົມແບບມີສ່ວນຮ່ວມ ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ພ້ອມທັງສູ້ຊົນ ສືບຕໍ່ ຈັດຕັ້ງປະຕິບັດການຝຶກອົບຮົມ ໃນຮູບແບບ ດັ່ງກ່າວ
7. ກອງປະຊຸມໄດ້ຮັບຟັງລາຍງານກ່ຽວກັບການຈັດຕັ້ງປະຕິບັດ ການຮຽນ-ການສອນ ແລະ ການຖອດຖອນ ບົດຮຽນ ດ້ານດີ, ດ້ານອ່ອນ ແລະ ຂໍ້ຫຍຸ້ງຍາກ ຂອງໂຮງຮຽນເຕັກນິກ ວິຊາຊີບ ແບບປະສົມ 6 ແຂວງພາກເໜືອ ແລະ ເຫັນດີເຫັນພ້ອມ ໃຫ້ສືບຕໍ່ຈັດຕັ້ງປະຕິບັດ ແນວຄວາມຄິດຮູບແບບການ ຝຶກອົບຮົມ ວິຊາຊີບ ແບບປະສົມ ໂດຍສະເພາະການຝຶກອົບຮົມວິຊາຊີບໄລຍະສັ້ນ ແກ່ຊາວບ້ານ ແລະ ຊຸມຊົນໃຫ້ຫລາຍຂຶ້ນ
8. ກອງປະຊຸມເຫັນດີ ເປັນເອກະພາບ ນຳຮ່າງຄຳສັ່ງແນະນຳ ວ່າດ້ວຍການຈັດຕັ້ງສອບເສັງ ແລະ ສຳພາດ ຮັບນັກຮຽນ ເຂົ້າຮຽນໃນໂຮງຮຽນ ອາຊີວະສຶກສາ ໃນສົກຮຽນ 2011-2012, ເຫັນດີກ່ຽວກັບການເປີດໂອກາດໃຫ້ແກ່ ຜູ້ເຂົ້າຮຽນ ວິຊາຊີບ ລະດັບ 3-6 ເດືອນໂດຍ ບໍ່ກຳນົດເງື່ອນໄຂ ລະດັບການສຶກສາ ສາຍສາມັນ ແລະ ເຫັນດີໃຫ້ພະແນກ ສຶກສາທິການແຂວງ ແບ່ງຕົວເລກນັກຮຽນ ຈົບມັດທະຍົມຕົ້ນ ເພື່ອເຂົ້າຮຽນລະດັບ ວິຊາຊີບ 9+3 ທີ່ໂຮງຮຽນວິຊາຊີບ ຂອງແຂວງ ຕາມຈຳນວນຕົວເລກ ຂອງໂຮງຮຽນທີ່ໄດ້ຮັບອະນຸມັດ.
9. ກອງປະຊຸມໄດ້ຮັບຟັງ ກ່ຽວກັບຜົນສຳຫລວດ ຄວາມຕ້ອງ ການເຂົ້າຮຽນສາຍອາຊີວະສຶກສາ ຂອງນັກຮຽນ ມັດທະຍົມ ຕອນຕົ້ນ ໃນນັ້ນມີນັກຮຽນ ທີ່ໄດ້ຮັບ ການສຳພາດ ທັງໝົດ 7,832 ຄົນ, ນັກຮຽນທີ່ຕ້ອງການ ເຂົ້າຮຽນຕໍ່ ມັດທະຍົມ ຕອນປາຍ 5,190 ຄົນ ເທົ່າກັບ 66 %,ເຂົ້າຮຽນ ຕໍ່ໃນສາຍອາຊີວະສຶກສາ 2561 ຄົນ ເທົ່າກັບ 32% ແລະ ບໍ່ຕ້ອງການເຂົ້າຮຽນຕໍ່ 78 ຄົນ ເທົ່າກັບ 1% ໃນນັ້ນສາຂາວິຊາທີ່ ຕອ້ງການຮຽນ ຫລາຍ ແມ່ນສາຂາວິຊາ ປຸ່ງແຕ່ງ ອາຫານ 371 ຄົນ ແລະ ສາຂາທີ່ນັກຮຽນເຂົ້າຮຽນໜ້ອຍກ່ວາໝູ່ແມ່ນ ວິຊາ ຊ່າງຈອດ ແລະ ທໍ່ນ້ຳ 18 ຄົນ

10. ກອງປະຊຸມໄດ້ຄົ້ນຄ້ວາ ເຄື່ອງແບບນັກຮຽນ ແລະ ຕົກລົງເປັນເອກະພາບ

1. ພາກທິດສະດີ

- ນັກຮຽນຊາຍ: ນຸ່ງເສື້ອເຊີດສີຂາວແຂນສັ້ນຫລືແຂນຍາວ,ຕິດສັນຍາລັກຂອງໂຮງຮຽນໃສ່ບ່າເບື້ອງຊ້າຍ (ບໍ່ໃສ່ກາລະວັດ), ນຸ່ງໂສ້ງຂາຍາວ ສີດຳ ຫລື ຟ້າແກ່ ແລະ ຕັດຜົມສັ້ນ
- ນັກຮຽນຍິງ: ນຸ່ງເສື້ອເຊີດສີຂາວແຂນສັ້ນຫລືແຂນຍາວ, ຕິດສັນຍາລັກຂອງໂຮງຮຽນໃສ່ບ່າເບື້ອງຊ້າຍ (ບໍ່ໃສ່ກາລະວັດ), ນຸ່ງສິ້ນສີດຳ ຫລື ຟ້າແກ່ ແລະ ມັດຜົມເປັນລະບຽບ
- ໃສ່ເກີບຂັດມັນສີດຳ

2. ພາກປະຕິບັດ

- ສີຟ້າ: ສຳລັບນັກຮຽນ ສາຂາວິຊາ ຊ່າງຕ່າງໆ
- ສີຂຽວ: ສຳລັບນັກຮຽນ ສາຂາວິຊາ ກະສິກຳ
- ສີຂາວ: ສຳລັບນັກຮຽນ ສາຂາວິຊາ ອາຫານ ແລະ ການໂຮງແຮມ
- ສີບົວ ແລະ ສີກາກີ: ສຳລັບນັກຮຽນ ສາຂາວິຊາ ບໍລິຫານທຸລະກິດ

11. ກອງປະຊຸມໄດ້ຕ້ອນຮັບ ຄະນະຜູ້ແທນ ຈາກມະຫາວິທະຍາໄລ ອຸດສາຫະກຳ ຮ່າໂນ້ຍ, ຊຶ່ງທາງມະຫາວິທະຍາໄລ ຍິນດີ ໃຫ້ທຶນການສຶກສາແກ່ຄູອາຈານ ອາຊີວະສຶກສາຂອງລາວ ເພື່ອຍົກລະດັບວິຊາສະເພາະ ຈຳນວນ 10 ທຶນຕໍ່ປີ

12. ກອງປະຊຸມໄດ້ສັງເກດຕີລາຄາ ເຫັນວ່າການວາງສະແດງຜົນງານ ຂອງຄູອາຈານ ແລະ ນັກຮຽນ ອາຊີວະສຶກສາ ໃນສົກ 2010-11 ມີຄວາມເຄືອບໜ້າກ່ວາຄັ້ງຜ່ານມາ, ພ້ອມທັງໄດ້ກຳນົດຫົວຂໍ້ໃນການແຂ່ງ ໃນສົກຮຽນ 2012 ຄື: ຜະລິດສື່ຮັບໃຊ້ ການຮຽນ-ການສອນ ສາຍອາຊີວະສຶກສາ ແລະ ສື່ການສອນສຳລັບ ວິຊາ ວິທະຍາສາດທຳມະຊາດ ຊັ້ນມັດທະຍົມສຶກສາ (ສ່ວນລາຍລະອຽດກົມອາຊີວະສຶກສາຈະມີແຈ້ງການພາຍຫລັງ)

13. ກອງປະຊຸມຍັງໄດ້ຮັບກຽດຕ້ອນຮັບ ທ່ານລັດຖະມົນຕີວ່າການ ກະຊວງສຶກສາທິການ, ພ້ອມທັງໄດ້ຮັບຟັງຄຳເຫັນ ໃຫ້ທິດຊີ້ນຳ ໃນການຈັດຕັ້ງປະຕິບັດແຜນພັດທະນາ ວຽກງານອາຊີວະສຶກສາ ສົກຮຽນ 2011-12

14. ກອງປະຊຸມເຫັນດີເປັນເອກະພາບ ເລືອກໂຮງຮຽນເຕັກນິກ-ວິຊາຊີບແບບປະສົມ ແຂວງອຸດົມໄຊ ເປັນສະຖານທີ່ຈັດ ກອງປະຊຸມ ຜູ້ບໍລິຫານ ອາຊີວະສຶກສາທົ່ວປະເທດ ຄັ້ງທີ່ XIII ໃນເດືອນ ພຶດສະພາ 2012

ກອງປະຊຸມຮຽກຮ້ອງມາຍັງຜູ້ບໍລິຫານເປັນແບບຢ່າງນຳໜ້າ ໃນທຸກດ້ານ ນຳພາພະນັກງານ-ຄູອາຈານ ປະຕິບັດມະຕິສະບັບນີ້ໃຫ້ເປັນຈິງ. ພ້ອມກັນນີ້ ກໍ່ຮຽກຮ້ອງມາຍັງ ພະນັກງານ-ຄູອາຈານ, ນັກຮຽນ-ນັກສຶກສາ ທຸກຄົນ ຈົ່ງເຊີດຊູຄວາມຮັບຜິດຊອບ ແລະ ມານະຈິດບາກບັ່ນບຸກບືນ ໃນການປະຕິບັດໜ້າທີ່ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ວຽກງານອາຊີວະສຶກສາ ສ້າງບາດກ້າວ ບຸກທະລຸໃນສີ່ດ້ານໃຫ້ໄດ້, ປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2011

ຕ| ປະທານກອງປະຊຸມ

ໜູພັນ ອຸດສາ